ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ
Lao-China Securities Public Company

ເລກທີ 191 /ບລຈ

ນະຄອນຫຼວງວຽງຈັນ, ວັນທີ 12 ມິຖຸນາ 2026

ໜັງສືລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,

ບັນດາທ່ານຜູ້ຖືຮຸ້ນຂອງ ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ ທີ່ນັບຖື.

ເລື່ອງ: ລາຍງານການລາອອກຂອງຮອງຜູ້ອຳນວຍການຂອງ ບລຈ.

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ), ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບ ວ່າດ້ວຍການເປີດເຜີຍຂໍ້ມູນ, ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018
- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ບລຈ ສະໄໝວິສາມັນ ຄັ້ງທີ 1 ປະຈຳປີ 2026, ສະບັບເລກທີ 194/ບລຈ, ລົງວັນທີ 12 ມິຖຸນາ 2026.

ບໍລິສັດຫຼັກຊັບ ລາວ-ຈີນ ມະຫາຊົນ (ບລຈ) ຂໍຮຽນລາຍງານຕໍ່ທ່ານ ກ່ຽວກັບການລາອອກຂອງຮອງ ຜູ້ອຳນວຍການຂອງ ບລຈ ໂດຍມີລາຍລະອຽດ ດັ່ງນີ້:

1. ບລຈ ໄດ້ຈັດກອງປະຊຸມສະພາບໍລິຫານ ໃນວັນທີ 11 ມິຖຸນາ 2026 ແລະ ໄດ້ເຫັນດີຮັບຮອງການ ລາອອກຂອງ ທ່ານ ພິງສະຫວັດ ລືນາມ ຈາກຕຳແໜ່ງ ຮອງຜູ້ອຳນວຍການ ຂອງ ບລຈ, ທ່ານ ພິງສະ ຫວັດ ລືນາມ ຈະບໍ່ດຳລົງຕຳແໜ່ງຮອງຜູ້ອຳນວຍການຂອງ ບລຈ ອີກຕໍ່ໄປ, ນັບແຕ່ວາລະກອງ ປະຊຸມສະພາບໍລິຫານນີ້ ໄດ້ຜ່ານການຮັບຮອງເຫັນດີ ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງຮຽນສະເໜີມາຍັງທ່ານ ເພື່ອຊາບ ແລະ ຖືເປັນຂໍ້ມູນໃນການລາຍງານ.

ຜູ້ອຳນວຍການ

ບໍລິສັດ ຫຼັກຊັບ ລາວ-ຈີນ ມະຫາຊົນ Lao-China Securities Public Company

ລືນ ລິ

ຜູ້ປະສານງານ ກອງເລຂານຸການສະພາບໍລິຫານ ບລຈ: ທ່ານ ນາງ ຈັນພະພອນ ສີຫາລາດ, 020 55995868

ຫ້ອງການເລກ A6 ຂອງຕຶກເລກ 1 ເຂດເສດຖະກິດພິເສດປຶງຫາດຫຼວງ, ນະຄອນຫຼວງວຽງຈັນ, ສປປ ລາວ, ຕູ້ ປ.ນ: 3373.
ໂທລະສັບ: (856-21) 419222, 419212, 419210 ແຟັກ: (856-21) 419221. ເວັບໄຊທ໌: https://www.lcs.com.la